# ຄຳເຕືອນສຳຫລັບຄົນຫາປາທັງຫລາຍ ແລະຄອບຄົວຂອງເຂົາເຈົ້າ

ເຖິງແມ່ນວ່າປາຫລາຍຊະນິດທີ່ຈະຈັບພາຍໃນມົລຣັຖຄອນເນັກທີຄັດນີ້ ສາມາດຮັບປະທານໄດ້ດ້ວຍຄວາມປອດພັຍ ແລະໂດຍບໍ່ມີຜົນຮ້າຍຕໍ່ສຸຂະພາບ, ກໍຍັງມີປາອີກບາງຊະນິດຕາມແຫລ່ງນ້ຳຕ່າງ ໆ ຂອງມົນຣັຖຄອນເນັກທີຄັດທີ່ມີ ສານເຄມີອັນຕຣາຍຮວມຢູ່ໃນຕົວ.

## ແມ່ນ້ຳແລະທະເລສາບທີ່ຣະບຸຢ່າງເຈາະຈົງ

ປາອາດມີສານເຄມີຫຣືສານທີ່ມີພິດຊະນິດອື່ນຮວມຢູ່ໃນຕົວ, ໂດຍສະເພາະປາທີ່ມາຈາກແມ່ນ້ຳຮູຊາທໍນິກ (Housatonic River), ໜອງດອດຈ໌ (Dodge Pond ຢູ່ເມືອງ East Lyme), ທະເລສາບ ແມັກດໍນໍ (Lake McDonough ຢູ່ເມືອງ Barkhamsted), ທະເລສາບຊິລເວີ (Silver Lake ຢູ່ເມືອງ Berlin-Meriden) ແລະທະເລສາບໄວອັດສັບ (Wyassup Lake ຢູ່ເມືອງ North Stonington). ປາເຫລົ່ານີ້ ໃຜ ໆ *ບໍ່ຄວນຮັບປະທານ*ເດັດຂາດ, *ໂດຍສະເພາະຢ່າງຍິ່ງ*ຍິງຖືພາ.

## ແຫລ່ງນ້ຳອື່ນ ໆ ຂອງມົລຣັຖຄອນເນັກທີຄັດ

ປາຈາກແຫລ່ງນ້ຳອື່ນ ໆ ຂອງມົລຣັຖຄອນເນັກທີຄັດມີສານພິດຮວມຢູ່ໃນຕົວໃນປະຣິມານທີ່ນ້ອຍກວ່າ, ແຕ່ກໍຍັງມີ ສານທີ່ມີພິດຮວມຢູ່ໃນຕົວໃນປະຣິມານທີ່ພໍໃຫ້ກັງວົນໄດ້. ບຸກຄົນປະເພດຕໍ່ໄປບໍ່ຄວນຮັບປະທານປາທີ່ຈັບຕາມແມ່ນ້ຳ ແລະທະເລສາບຂອງມົລຣັຖຄອນເນັກທີຄັດຫລາຍກວ່າ*ເດືອນລະເທື່ອ*ເປັນອັນຂາດ.

- ຍິງຖືພາ;
- ຍິງທີ່ກຳລັງຄິດຈະຖືພາ ແລະ
- ເດັກນ້ອຍ.

ບຸກຄົນປະເພດອື່ນບໍ່ຄວນຮັບປະທານປາທີ່ຈັບຕາມແມ່ນ້ຳແລະທະເລສາບຂອງມົລຣັຖຄອນເນັກທີຄັດຫລາຍກວ່າ *ອາທິດລະເທື່ອ*ເປັນອັນຂາດ.

## ການຈັບປານ້ຳເຄັມ

ປານ້ຳເຄັມໃນອ່າວລອງໄອແລນ (Long Island Sound) ສ່ວນຫລາຍສາມາດຮັບປະທານຢ່າງປອດພັຍໄດ້, ຍົກເວັ້ນປາຂນາດໃຫຍ່ສອງຊະນິດ (ຄື bluefish ແລະ striped bass). ປານ້ຳເຄັມສອງຈຳພວກດັ່ງກ່າວ *ຫ້າມ*ຍິງຖືພາ, ຍິງທີ່ກຳລັງຄິດຈະຖືພາ ຫຣືເດັກນ້ອຍ ຮັບປະທານເດັດຂາດ.

**ຫາກທ່ານປະຕິບັດຕາມຄຳແນະນຳນີ້, ທ່ານຈະໄດ້ຮັບປະທານປາດ້ວຍຄວາມປອດພັຍແລະປາສຈາກຜົນຮ້າຍ ຕໍ່ສຸຂະພາບ.**

ຫາກທ່ານຕ້ອງການຊາບຣາຍລະອຽດເພີ່ມເຕີມກ່ຽວກັບເຣື່ອງນີ້, ກະຣຸນາຕິດຕໍ່ກົມສາທາຣະນະສຸກ (Department of Public Health) ແຫ່ງມົລຣັຖຄອນເນັກທີຄັດ ໂດຍໂທໄປຍັງ (860) 509-7742 ຫຣືກົມປ້ອງກັນສະພາບແວດລ້ອມ (Deparment of Environmental Protection) ໂດຍໂທໄປຍັງ (860) 424-3474.

*Warning to People Who Eat Fish Caught in Connecticut* has been produced as a collaborative project of Connecticut's Departments of Public Health and Environmental Protection.
[Lao Language Version] 0300